ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກໍາ ແລະປ່າໄມ້ | ເລກທີ 0837/ກປ

ນະຄອນຫຼວງວຽງຈັນ, ວັນທີ 03 APR 2013

# ຄໍາສັ່ງ

## ຂອງລັດຖະມົນຕີ

## ກ່ຽວກັບການອອກໃບຢັ້ງຢືນສຸຂານາໄມພືດ (Phytosanitary certificate - PC)

ເຖິງ: - ທ່ານຫົວໜ້າພະແນກກະສິກໍາ ແລະປ່າໄມ້ປະຈໍາແຂວງ ແລະນະຄອນຫຼວງ ໃນຂອບເຂດທົ່ວປະເທດ;

- ທ່ານຫົວໜ້າດ່ານປ້ອງກັນພືດສາກົນ ໃນຂອບເຂດທົ່ວປະເທດ.

– ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008;

– ອີງຕາມຄໍາລັດແນະນໍາປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;

– ອີງໃສ່ໜັງສືສະເໜີຂອງກົມປູກຝັງ ເລກທີ 0528/ກປຝ, ລົງວັນທີ 19 ມີນາ 2013.

ໃນໄລຍະຜ່ານມາ ພວກເຮົາໄດ້ນໍາໃຊ້ໃບຢັ້ງຢືນສຸຂານາໄມພືດ ຕາມລະບົບຖານຂໍ້ມູນການອອກໃບຢັ້ງຢືນສຸຂານາໄມພືດແຫ່ງຊາດ (National Phytosanitary certificate Database – NPD) ມາແຕ່ປີ 2004 ຊຶ່ງເປັນມາດຕະການໜຶ່ງໃນຫຼາຍໆມາດຕະການ ທີ່ລະບຸໄວ້ໃນຄໍາລັດແນະນໍາປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ອັນໄດ້ປະກອບສ່ວນເຮັດໃຫ້ການສະກັດກັ້ນການແຜ່ລະບາດຂອງສັດຕູພືດ ຈາກພາຍໃນ ອອກສູ່ພາຍນອກ, ຈາກພາຍນອກ ເຂົ້າມາ ສປປ ລາວ ໄດ້ດີໂດຍພື້ນຖານ; ແຕ່ເນື່ອງຈາກວ່າ: ໃນປະຈຸບັນນີ້ ສປປ ລາວ ພວກເຮົາ ໄດ້ຖືກຮັບເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (WTO) ນິຕິກໍາ ແລະລະບຽບການຫຼາຍອັນ ລວມທັງການອອກໃບຢັ້ງຢືນສຸຂານາໄມພືດ (PC) ຈໍາເປັນຕ້ອງໄດ້ປັບປຸງໃຫ້ສອດຄ່ອງກັບລະບຽບການຂອງສົນທິສັນຍາປ້ອງກັນພືດສາກົນ (IPPC).

ເພື່ອເຮັດໃຫ້ການອອກໃບຢັ້ງຢືນສຸຂານາໄມພືດ (Phytosanitary certificate - PC) ແບບໃໝ່ ຂອງ ສປປ ລາວ ຖືກນໍາໃຊ້ຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ທັງສອດຄ່ອງກັບກົດໝາຍ ແລະສົນທິສັນຍາປ້ອງກັນພືດນັ້ນ,

## ລັດຖະມົນຕີ ວ່າການກະຊວງກະສິກໍາ ແລະປ່າໄມ້ ອອກຄໍາສັ່ງ:

1. ໃຫ້ ພະແນກກະສິກໍາ ແລະປ່າໄມ້ປະຈໍາແຂວງ, ນະຄອນຫຼວງ ທີ່ມີ "ດ່ານປ້ອງກັນພືດສາກົນ" ນໍາໃຊ້ແບບຟອມໃບຢັ້ງຢືນສຸຂານາໄມພືດ (Phytosanitary certificate - PC) ແບບໃໝ່ ມີກາປະທັບຕຣາທີ່ເປັນເອກະພາບໃນທົ່ວປະເທດ ຕາມທີ່ໄດ້ຄັດຕິດມາພ້ອມນີ້ ນັບແຕ່ວັນທີ 18 ເດືອນເມສາ 2013 ເປັນຕົ້ນໄປ;
2. ບັນດາ ພະແນກກະສິກໍາ ແລະປ່າໄມ້ປະຈໍາແຂວງ, ນະຄອນຫຼວງ ທີ່ມີ "ດ່ານປ້ອງກັນພືດສາກົນ" ມີຄວາມຮັບຜິດຊອບໃນການຂຶ້ນແຜນງົບປະມານ ເພື່ອປົກປັກຮັກສາ, ພັດທະນາ ແລະຕິດຕັ້ງລະບົບຖານຂໍ້ມູນແບບໃໝ່ນີ້ ປ່ຽນແທນລະບົບຖານຂໍ້ມູນໃນປະຈຸບັນ;/ໆ

3. ໃຫ້ ກົມປູກຝັງ ແຈ້ງໃຫ້ຄະນະເລຂາທິການສົນທິສັນຍາປ້ອງກັນພືດສາກົນ (IPPC) ເພື່ອແຈ້ງຕໍ່ໄປຍັງບັນດາປະເທດທີ່ເປັນພາຄີສົນທິສັນຍາປ້ອງກັນພືດສາກົນ ໄດ້ຮັບຊາບເຖິງການປ່ຽນແປງໃບຢັ້ງຢືນສຸຂານາໄມພືດ (PC) ຂອງ ສປປ ລາວ;

4. ມອບໃຫ້ ກົມປູກຝັງ ສ້າງເປັນແຜນຝຶກອົບຮົມເຕັກນິກການກວດກາພືດ, ຜະລິດຕະພັນພືດ, ວັດຖຸອື່ນ ແລະແນະນຳການອອກໃບຢັ້ງຢືນສຸຂານາໄມພືດ (PC) ຕາມມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ຂອງສົນທິສັນຍາປ້ອງກັນພືດສາກົນ (ISPMs, IPPC) ແລະຂໍ້ຕົກລົງສຸຂານາໄມ ແລະສຸຂານາໄມພືດ (SPS Agreement) ຂອງອົງການການຄ້າໂລກ (WTO) ເພື່ອອຳນວຍຄວາມສະດວກທາງດ້ານການຄ້າ ຕາມລະບຽບກົດໝາຍ;

5. ມອບໃຫ້ ດ່ານປ້ອງກັນພືດ ຮັບຜິດຊອບ ກວດກາພືດ ແລະລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ (PC) ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ກ່ຽວກັບສິດ ແລະໜ້າທີ່ຂອງເຈົ້າໜ້າທີ່ປ້ອງກັນພືດ, ມາດຕາ V (Article V: Phytosanitary certification) ຂອງສົນທິສັນຍາປ້ອງກັນພືດສາກົນ (IPPC) ແລະຈັດຕັ້ງປະຕິບັດມາດຕາ 26 ຂອງດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດທີ່ລະບຸກ່ຽວ ກັບການກວດກາ ແລະການຢັ້ງຢືນການສົ່ງອອກ ຢ່າງເຂັ້ມງວດ;

6. ຜູ້ຮັບຜິດຊອບ ຫຼືເຈົ້າໜ້າທີ່ປ້ອງກັນພືດ ຜູ້ທີ່ມີສິດລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ (PC) ຕ້ອງໄດ້ຮັບການແຕ່ງຕັ້ງ ຈາກລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ຕາມການສະເໜີຂອງພະແນກກະສິກຳ ແລະປ່າໄມ້ ແລະການຢັ້ງຢືນຂອງຄະນະຈັດຕັ້ງແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ ແລະຢູ່ພາຍໃຕ້ການຄຸ້ມຄອງດ້ານວິຊາການ ແລະການຕິດຕາມກວດກາ ຂອງ ກົມປູກຝັງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ;

7. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ./.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ວິໄລວັນ ພົມເຂ

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ຫ້ອງວ່າການສູນກາງພັກ | 01 ສະບັບ (ໃຫ້ຊາບລາຍງານ); |
| 2. ຫ້ອງວ່າການສຳນັກງານນາຍົກ | 01 ສະບັບ (ໃຫ້ຊາບລາຍງານ); |
| 3. ກະຊວງອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອຊາບ); |
| 4. ກະຊວງສາທາລະນະສຸກ | 01 ສະບັບ (ເພື່ອຊາບ); |
| 5. ລັດຖະມົນຕີຊ່ວຍວ່າການ ທ່ານລະ | 01 ສະບັບ (ເພື່ອຊາບ); |
| 6. ຫ້ອງການກະຊວງ | 01 ສະບັບ (ເພື່ອຕິດຕາມ); |
| 7. ກົມປູກຝັງ | 01 ສະບັບ (ເພື່ອປະຕິບັດ); |
| 8. ກົມຈັດຕັ້ງ ແລະພະນັກງານ | 01 ສະບັບ (ເພື່ອຊາບ); |
| 9. ກົມກວດກາ | 01 ສະບັບ (ເພື່ອຊາບ); |
| 10. ກົມແຜນການ ແລະການຮ່ວມມື | 01 ສະບັບ (ເພື່ອຊາບ); |
| 11. ຫ້ອງວ່າການປົກຄອງແຂວງ ບ່ອນລະ | 01 ສະບັບ (ເພື່ອຊ່ວຍຊີ້ນຳ); |
| 12. ເກັບມ້ຽນ | 01 ສະບັບ. |